# ບົດຖະແຫຼງຂ່າວ

# ຂອງຄະນະສະເພາະກິດ ເພື່ອປ້ອງກັນ ຄວບຄຸມ ແລະ ແກ້ໄຂ ພະຍາດອັກເສບປອດທີ່ເກີດ

# ຈາກເຊື້ອຈຸລະໂລກສາຍພັນໃໝ່ COVID-19

## ປະຈໍາວັນສຸກ ວັນທີ 17 ກັນຍາ ປີ 2021

ສະບາຍດີ ບັນດາທ່ານທີ່ກໍາລັງຕິດຕາມຮັບຊົມ ແລະ ຮັບຟັງ ການຖ່າຍທອດສົດຖະແຫຼງຂ່າວ ຂອງຄະນະສະເພາະກິດ **ປະຈໍາວັນສຸກ ວັນທີ 17 ກັນຍາ ປີ 2021**.

ຂ້າພະເຈົ້າ ດຣ. ສີສະຫວາດ ສຸດທານີລະໄຊ ຮອງຫົວໜ້າກົມຄວບຄຸມພະຍາດຕິດຕໍ່, ກະຊວງ ສາທາລະນະສຸກ ຈະຖະແຫຼງຂ່າວ ກ່ຽວກັບ ສະພາບໂຄວິດ-19 ຢູ່ ສປປ ລາວ, ໃນທົ່ວໂລກ ແລະ ບາງຂໍ້ແນະນໍາເພີ່ມເຕີມ.

**ຕໍ່ໄປ ຂ້າພະເຈົ້າ ຂໍລາຍງານ:**

❖ **ສະພາບການລະບາດພະຍາດໂຄວິດ-19 ຢູ່ ສປປ ລາວ, ມາຮອດວັນທີ 16 ກັນຍາ 2021:**

ໄດ້ກວດວິເຄາະທັງໝົດ **4,690** ຄົນ, ໃນນັ້ນ ກວດພົບຜູ້ຕິດເຊື້ອໃໝ່ ທັງໝົດ **288** ຄົນ:

- **ກໍລະນີນໍາເຂົ້າ ມີ 69 ຄົນ** ຈາກ ແຂວງ ສາລະວັນ 44 ຄົນ, ສະຫວັນນະເຂດ 14 ຄົນ, ນະຄອນຫຼວງ 7 ຄົນ, ຈໍາປາສັກ 2 ຄົນ ແລະ ຄໍາມ່ວນ 2 ຄົນ ເຊິ່ງກວດພົບຈາກແຮງງານລາວ ຫຼື ຜູ້ທີ່ເດີນທາງມາຈາກຕ່າງປະເທດ ເຂົ້າມາຕາມຈຸດຜ່ານແດນສາກົນ.
- **ສໍາລັບ ການຕິດເຊື້ອໃນຊຸມຊົນ ມີ 219 ຄົນ ລາຍລະອຽດ ດັ່ງຕໍ່ໄປນີ້:**

- **ສະຫວັນນະເຂດ 139 ຄົນ:** ໃນນັ້ນ 135 ຄົນ ແມ່ນຕິດເຊື້ອຢູ່ໃນສະຖານທີ່ຄຸມຂັງ ແລະ ອີກ 4 ຄົນ ແມ່ນ:

  - ເພດຍິງ, ອາຍຸ 35 ປີ, ອາຊີບ: ພະນັກງານຄູ, ບ້ານນາເລົ່າ, ນະຄອນໄກສອນ (ສຳຜັດໃກ້ຊິດກັບພະນັກງານບໍລິສັດ mizuzu ສາຍເຄເບີນ)
  - ເພດຊາຍ, ອາຍຸ 39 ປີ, ອາຊີບ: ພະນັກງານການຄ້າແຂວງ, ບ້ານນາເລົ່າ, ນະຄອນໄກສອນ (ສຳຜັດໃກ້ຊິດກັບພະນັກງານບໍລິສັດ mizuzu ສາຍເຄເບີນ)
  - ເພດຍິງ, ອາຍຸ 69 ປີ, ອາຊີບ: ຂາຍຢາ, ບ້ານອຸດົມວິໄລ, ນະຄອນໄກສອນ (ສຳຜັດໃກ້ຊິດກັບພະນັກງານແພດຕຶກເດັກ)

- ເພດຊາຍ, ອາຍຸ 48 ປີ, ອາຊີບ: ຊາວນາ, ບ້ານຫົວເມືອງເໜືອ, ນະຄອນ ໄກສອນ (ກຸ່ມສ່ຽງ)

- **ຈໍາປາສັກ 44 ຄົນ:**
  - ໜອງປັກແຣດ, ເມືອງປະທຸມພອນ 07 ຄົນ
  - ກຸ່ມນະຄອນ ປາກເຊ ຈໍານວນ 36 ຄົນ
  - ເມືອງ ໂຂງ 01 ຄົນ
- **ຄໍາມ່ວນ 26 ຄົນ:** ເຊິ່ງກໍາລະນີຕິດເຊື້ອທັງໝັດນີ້ ມີ 13 ບ້ານ ຈາກ 3 ເມືອງ ຄື:
  - ເມືອງ ທ່າແຂກ 10 ບ້ານ
  - ເມືອງ ເຊບັ້ງໄຟ 01 ບ້ານ

- ເມືອງ ໜອງບົກ 02 ບ້ານ

- **ນະຄອນຫຼວງ 9 ຄົນ:**

- ຈາກ ໂຮງໝໍກະເສມຣາດ 01 ຄົນ ເປັນເພດຍິງ, ອາຍຸ 73 ປີ, ບ້ານ ທົ່ງນ້ອຍ, ເມືອງ ປາກກະດິງ, ແຂວງບໍລິຄໍາໄຊ, ເຂົ້າໂຮງໝໍ ກະເສີມລາດ ວັນທີ 15 ເດືອນ ກັນຍາ, ເຂົ້າມາດ້ວຍອາການອິດເມື່ອຍ, ອ່ອນແຮງ ປວດຕີນໂຕ, ຫາຍໃຈຍາກ, ເບື່ອອາຫານ, ບໍ່ໄຂ້. ໂຮງໝໍໄດ້ກວດຫາເຊື້ອ ໂຄວິດ-19 ໃຫ້ຜົນບວກ ໃນວັນດຽວ ກັນ ໂຮງໝໍຈຶ່ງສົ່ງຕົວຢ່າງມາກວດຢັ້ງຢືນ ຢູ່ ສູນວິເຄາະລະບາດວິທະຍາ ແລະ ໃນວັນ ທີ 16 ກັນຍາ ສວລ ໄດ້ກວດຄືນຕົວຢ່າງ ຜົນອອກມາບວກເຊັ່ນດຽວກັນ.
- ກຸ່ມຕະຫລາດດົງໝາກຄາຍ ມີ 03 ຄົນ:
  - ເພດຊາຍ, ອາຍຸ 29 ປີ, ອາຊີບ: ທະຫານ, ບ້ານດົງໝາກຄາຍ,

ເມືອງໄຊທານີ ແລະ ສຳຜັດໃກ້ຊິດກັບຜູ້ເປັນເມຍທີ່ຕິດເຊື້ອ

- ເພດຊາຍ, ອາຍຸ 33 ປີ, ອາຊີບ: ຄ້າຂາຍ, ບ້ານໂນນແສງຈັນ, ເມືອງໄຊທານີ ແລະ ສຳຜັດໃກ້ຊິດກັບຜູ້ເປັນເມຍທີ່ຕິດເຊື້ອ
- ເພດຍິງ, ອາຍຸ 47 ປີ, ອາຊີບ: ຄ້າຂາຍ (ຜັກ) ຕະຫລາດດົງໝາກຄາຍ, ບ້ານໂນນແຕ້, ເມືອງໄຊທານີ

- ກຸ່ມໂຮງງານອານພິລາວ ມີ 02 ຄົນ:
  - ເພດຊາຍ, ອາຍຸ 23 ປີ, ອາຊີບ: ກຳມະກອນ ພະແນກຊ່າງຈັກ, ບ້ານໜອງທາເໜືອ (ຢູ່ຫໍພັກ), ສຳພັດໃກ້ຊິດກັບເພື່ອນຮ່ວມງານທີ່ຕິດເຊື້ອ

- ເພດຊາຍ, ອາຍຸ 36 ປີ, ອາຊີບ: ກຳມະກອນ ພະແນກຊ່າງຈັກ, ບ້ານຜາງແຫ້ງ, ເມືອງນາຊາຍທອງ ແລະ ສຳພັດໃກ້ຊິດກັບເພື່ອນຮ່ວມງານທີ່ຕິດເຊື້ອ

- ກຸ່ມຕະຫລາດອິດຊີ ມີ 01 ຄົນ ເປັນເພດຊາຍ, ອາຍຸ 19 ປີ, ອາຊີບ: ຄ້າຂາຍ (ເຂົ້າຈີ່), ບ້ານດອນໜູນ, ເມືອງໄຊທານີ ແລະ ບໍ່ຮູ້ແຫຼ່ງທີ່ມາຂອງການຕິດເຊື້ອ.
- ໂຮງໝໍ 103 ມີ 01 ຄົນ, ອາຍຸ 30 ປີ, ອາຊີບ: ຊ່າງພາບທົ່ວໄປ, ບ້ານຊຽງຍືນ, ເມືອງຈັນທະບູລີ, ຜູ້ກ່ຽວໄດ້ເຂົ້າໂຮງໝໍ 103 ແຕ່ວັນທີ 10 ກັນຍາ 2021 ດ້ວຍອາການໄຂ້, ອັກເສບຖົງບີ ແລະ ບໍ່ຮູ້ແຫຼ່ງທີ່ມາຂອງການຕິດເຊື້ອ.

- ອີກ 1 ຄົນ ແມ່ນເຈົ້າໜ້າທີ່ ປກສ ນະຄອນຫຼວງ, ບ້ານໂນນແກ້ວ, ເມືອງສີໂຄດ ຕະບອງ, ເປັນກຸ່ມສ່ຽງ ຊຶ່ງສຳຜັດກັບຜູ້ຕິດເຊື້ອທີ່ໄດ້ລາຍງານໃນວັນທີ 15 ກັນຍາ 2021.

- **ສາລະວັນ 1 ຄົນ:** ເຈົ້າໜ້າທີ່ຕຳຫລວດ (ປກສ ແຂວງສາລະວັນ), ບ້ານໂພນແກ້ວ, ເມືອງ ສາລະວັນ.

➢ ປະຈຸບັນ ຜູ້ຕິດເຊື້ອໃໝ່ທັງໝົດ ໄດ້ເຂົ້ານອນແຍກປ່ຽວ ແລະ ຮັບການປິ່ນປົວຢູ່ ສະຖານທີ່ປິ່ນປົວທີ່ຖືກກຳນົດໄວ້.

➢ ມາຮອດມື້ນີ້ ພວກເຮົາມີຕົວເລກຜູ້ຕິດເຊື້ອສະສົມທັງໝົດ **18,347 ຄົນ**, ເສຍຊີວິດ

ສະສົມ **16** ຄົນ ແລະ ຄົນເຈັບກຳລັງປິ່ນປົວ ທັງໝົດ **3,938** ຄົນ.

➢ **ບ້ານທີ່ຍັງເປັນເຂດແດງ ໃນນະຄອນຫຼວງວຽງຈັນ ມີ 20 ບ້ານ**

➢ **ບ້ານທີ່ຍັງເປັນເຂດແດງ ໃນສະຫວັນນະເຂດ ມີ 23 ບ້ານ**

➢ **ບ້ານທີ່ຍັງເປັນເຂດແດງ ໃນແຂວງຄຳມ່ວນ ມີ 45 ບ້ານ**

➢ **ບ້ານທີ່ຍັງເປັນເຂດແດງ ໃນແຂວງບໍ່ແກ້ວ ມີ 4 ບ້ານ**

➢ **ບ້ານທີ່ຍັງເປັນເຂດແດງ ໃນແຂວງຈຳປາສັກ 8 ເມືອງ, 21 ບ້ານ**

- **ຜູ້ທີ່ມີຈຸດປະສົງຢາກກວດຊອກຫາເຊື້ອໂຄວິດ-19** ສຳລັບ **ນະຄອນຫຼວງວຽງຈັນ** ຢູ່ **ຈຸດເກັບຕົວຢ່າງບຶງຂະຫຍອງ** ເຊິ່ງເປີດໃຫ້ບໍລິການບັນດາທ່ານທຸກວັນ (ວັນຈັນ ຫາ

ວັນອາທິດ) ໃນຕອນເຊົ້າ ເວລາ 9:00-12:00 ໂມງ ແລະ ຍັງມີທີມງານເກັບຕົວຢ່າງເຄື່ອນທີ່ໄປເກັບໃນສະຖານທີ່ທີ່ມີການລາຍງານຄົນຕິດເຊື້ອ.

- ສໍາລັບແຂວງ ແມ່ນທ່ານສາມາດໄປກວດຊອກຫາເຊື້ອໄດ້ຢູ່ໂຮງໝໍແຂວງ ຫຼື ສະຖານທີ່ທີ່ກໍານົດໄວ້.

## ➢ ການເຝົ້າລະວັງຢູ່ຕາມຈຸດຜ່ານແດນ ໃນຂອບເຂດທົ່ວປະເທດ

- ວັນທີ 16 ກັນຍາ 2021 ມີຜູ້ເດີນທາງເຂົ້າຕາມດ່ານຕ່າງໆໃນ ສປປ ລາວ ຈໍານວນ ທັງໝົດ **2,155** ຄົນ.
- ປັດຈຸບັນ ທົ່ວປະເທດມີສູນຈໍາກັດບໍລິເວນທີ່ຍັງເປີດຢູ່ **112** ສູນ ແລະ **55** ໂຮງແຮມ, ມີຜູ້ຈໍາກັດບໍລິເວນ **7,505** ຄົນ.

## ➢ ຕໍ່ໄປນີ້ ຂ້າພະເຈົ້າຂໍລາຍງານສະພາບການຕິດເຊື້ອໃນທົ່ວໂລກ:

- ປັດຈຸບັນ ທົ່ວໂລກມີລາຍງານຜູ້ຕິດເຊື້ອສະສົມທັງໝົດ 227,784,746 (554,754 ໃໝ່), ເສຍຊີວິດທັງໝົດ 4,683,229 (9,040 ໃໝ່), ປິ່ນປົວຫາຍດີ 204,423,601 (566,535 ໃໝ່). ສຳລັບ 3 ອັນດັບ ປະເທດທີ່ມີຜູ້ຕິດເຊື້ອ ແລະ ເສຍຊີວິດຫຼາຍກວ່າໝູ່ໃນໂລກ ກໍ່ຍັງແມ່ນ **ສະຫະລັດອາເມລິກາ, ອິນເດຍ** ແລະ **ບຣາຊິວ**.
- **ບັນດາປະເທດທີ່ມີຊາຍແດນຕິດຈອດກັບ ສປປ ລາວ**

- ປະເທດທີ່ລາຍງານຜູ້ຕິດເຊື້ອຫຼາຍກວ່າໝູ່ແມ່ນ **ປະເທດໄທ** ເຊິ່ງມີຜູ້ຕິດເຊື້ອໃໝ່ 13,897 ຄົນ ແລະ ເສຍຊີວິດໃນມື້ດຽວ 188 ຄົນ, ຮອງລົງມາແມ່ນ **ສສ**

**ຫວຽດນາມ** ມີລາຍງານຜູ້ຕິດເຊື້ອໃໝ່ 10,489 ຄົນ ແລະ ເສຍຊີວິດໃນມື້ດຽວ 239 ຄົນ.

➢ **ບັນດາທ່ານທີ່ນັບຖື ແລະ ຮັກແພງທັງຫຼາຍ**

- ສະພາບການລະບາດພະຍາດຢູ່ ສປປ ລາວ ປັດຈຸບັນ ພົບເຫັນ ການຕິດເຊື້ອໃນຊຸມຊົນເພີ່ມຂຶ້ນຢ່າງຕໍ່ເນື່ອງ. ການຕິດເຊື້ອຢູ່ໃນຫຼາຍສາຂາອາຊີບ ເປັນຕົ້ນ ສຳນັກງານອົງການ, ລັດວິສາຫະກິດ, ບໍລິສັດເອກະຊົນ, ຄອບຄົວ ລວມທັງ ພະນັກງານດ່ານໜ້າ (ພະນັກງານແພດໝໍ, ພະຍາບານ, ປກສ ແລະ ປກຊ);
- ດັ່ງນັ້ນ, ຈຶ່ງຮຽກຮ້ອງມາຍັງບັນດາທ່ານ ເອົາໃຈໃສ່ເປັນເຈົ້າການໃນການປະຕິບັດມາດຕະການປ້ອງກັນການຕິດເຊື້ອຢ່າງເຄັ່ງຄັດ ແລະ ເຂັ້ມງວດ ຕາມແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ສະບັບເລກທີ 1177/ຫສນຍ, ລົງວັນທີ 15 ກັນຍາ 2021;

- ຖ້າຫາກທ່ານຢູ່ໃນກຸ່ມສ່ຽງ ຫຼື ເປັນກຸ່ມສຳພັດໃກ້ຊິດກັບຜູ້ທີ່ຕິດເຊື້ອ ໃຫ້ທ່ານແຍກໂຕເອງອອກຈາກຄອບຄົວ ຫຼື ໝູ່ເພື່ອນທັນທີ ພ້ອມທັງ ຮີບຮ້ອນໄປກວດຫາເຊື້ອ, ໃນໄລຍະລໍຖ້າຜົນກວດ ຕ້ອງຈຳກັດບໍລິເວນຕົນເອງ ເຖິງຜົນກວດອອກມາບໍ່ພົບເຊື້ອກໍ່ຕາມ ຈຳເປັນຕ້ອງສືບຕໍ່ ຈຳກັດບໍລິເວນຈົນຄົບ 14 ວັນ, ຖ້າຫາກທ່ານຮູ້ສຶກບໍ່ສະບາຍ ໃຫ້ໂທປຶກສາສາຍດ່ວນທັນທີ ຫຼື ໄປສະຖານບໍລິການສາທາລະນະສຸກທີ່ໃກ້ທີ່ສຸດ ພ້ອມທັງ ບອກຂໍ້ມູນລະອຽດວ່າທ່ານເປັນກຸ່ມສ່ຽງ;
- ອີກເທື່ອໜຶ່ງ, ຂໍຮຽກຮ້ອງມາຍັງ ພໍ່ແມ່, ພີ່ນ້ອງ, ປະຊາຊົນ ແລະ ທຸກພາກສ່ວນໃນສັງຄົມຈົ່ງພ້ອມໃຈກັນ ປະຕິບັດການດຳລົງຊີວິດປົກກະຕິແບບໃໝ່ (new normal) ເຊັ່ນ: ໝັ່ນລ້າງມືດ້ວຍນ້ຳສະອາດໃສ່ສະບູ ຫຼື ເຈວທີ່ມີທາດເຫຼົ້າ 70% ຂຶ້ນໄປ, ຮັກສາໄລຍະຫ່າງ, ໃສ່

ຜ້າປິດປາກ-ດັງ, ບໍ່ໄປສະຖານທີ່ແອອັດ ຫຼື ສະຖານທີ່ສ່ຽງ, ບໍ່ຊຸມແຊວກັນເປັນກຸ່ມ, ໄປຮັບການສັກວັກຊີນໃຫ້ຄົບໂດສ;

- ມາຮອດປະຈຸບັນ ທົ່ວປະເທດ ສັກວັກຊີນ ເຂັມທີ 1 ໄດ້ 2,722,304 ໂດສ (ກວມເອົາ 37.7%) ແລະ ທຸກເຂັມທີ່ແນະນຳ ໄດ້ 1,900,934 ໂດສ ( ກວມເອົາ 25.9 %);
- ທ່ານສາມາດໄປຮັບການບໍລິການສັກວັກຊີນ ຢູ່ ສູນການຄ້າລາວ-ໄອເຕັກ ເລີ່ມແຕ່ວັນທີ **20 ກັນຍາ 2021** ເປັນຕົ້ນໄປ ເຊິ່ງມີ ວັກຊີນຊີໂນຟາມເຂັມ **1** ແລະ ເຂັມ **2,** ແອດສະຕາເຊນີກາເຂັມ **2** ແລະ ໄຟເຊີ ເຂັມ **2**;
- ມາຮອດປັດຈຸບັນ ຕົວເລກຜູ້ທີ່ປິ່ນປົວຫາຍດີຈາກພະຍາດໂຄວິດ-19 ໃນຂອບເຂດທົ່ວປະເທດ ປະມານ 78% ຂອງຜູ້ຕິດເຊື້ອທັງໝົດ.

ມາຮອດນີ້ ການລາຍງານສະພາບພະຍາດ ໂຄວິດ-19 ປະຈຳສຸກ ວັນທີ 17 ກັນຍາ ປີ 2021 ຂອງຂ້າພະເຈົ້າ ໄດ້ສິ້ນສຸດພຽງເທົ່ານີ້, ຂໍສະແດງຄວາມຂອບໃຈມາຍັງບັນດາທ່ານ ທີ່ໄດ້ຕິດຕາມຮັບຟັງ ແລະ ຮັບຊົມ.

(ຂໍຂອບໃຈ)